


# ສານປື້ນປັ້ນການຕັດສິນທຸກຄະດີ ຮັບປະກັນຄວາມໂປ່ງໃສ ເປັນທຳ

● ໃນເມື່ອສັງຄົມມີການຂະຫຍາຍຕົວຢ່າງໄວວາ ສິ່ງທີ່ຕາມມາຄືບັນຫາໄພສັງຄົມເກີດມີຂີ້ລັກ ວັດແງະ ແລະ ອື່ນໆ ທີ່ສ້າງຄວາມບໍ່ສະຫງົບໃນສັງຄົມ ເມື່ອຖືກຈັບໄດ້ໄລ່ທັນຂອງເຈົ້າໜ້າທີ່ກໍເກີດມີການຮ້ອງຟ້ອງຕາມຂະບວນການຍຸຕິທຳ ແລະ ກ້າວໄປສູ່ການຕັດສິນຂອງສານແຕ່ລະຂັ້ນ ຫາກບໍ່ມີການລົງຮອຍກັນຂອງຜູ້ຖືກຫາ ແລະ ກ່າວຫາຄະດີມີຄວາມສະຫຼັບສັບຊ້ອນ ເຊິ່ງສານປະຊາຊົນສູງສຸດຈະຕ້ອງໄດ້ມີການພິພາກສາຕັດສິນຄະດີເພື່ອຄວາມເປັນທຳຂອງທຸກຝ່າຍຕາມລະບຽບກົດໝາຍ ທັງນີ້ ສະມາຊິກສະພາແຫ່ງຊາດ (ສສຊ) ຫຼາຍເຂດຮຽກຮ້ອງໃຫ້ສານຮີບຮ້ອນໃນການຕັດສິນຄຸນະດີທີ່ມີລັກສະນະແກ່ຍາວເກີນໄປ ແລະ ຄວນສົ່ງເສີມໃຫ້ມີນັກທະນາຍຄວາມໄດ້ມີບົດບາດເພື່ອເຮັດໃຫ້ຄະດີມີຄວາມຈະແຈ້ງຊັດເຈນຂຶ້ນຕື່ມ.



**ທ່ານ ຄຳພັນ ສິດທິດຳພາ** ປະທານສານປະຊາຊົນສູງສຸດ

ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ສະພາແຫ່ງຊາດຊຸດທີ VIII ກ່ຽວກັບຍົກສູງປະສິດທິພາບການດຳເນີນຄະດີຢູ່ສານຂັ້ນຕົ້ນ ແລະ ສານຂັ້ນອຸທອນໃຫ້ຮູ້ວ່າ: ສານປະຊາຊົນສູງສຸດແມ່ນໄດ້ເອົາໃຈໃສ່ໃນການຍົກລະດັບວິຊາການ ຈັນຍາບັນ ເພື່ອໃຫ້ມີຄວາມໂປ່ງໃສ ແລະ ເປັນທຳ ໄປຕາມຮູບການຂອງຄະດີ ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດທີ VIII ມານີ້ ສານປະຊາຊົນໄດ້ໄກ່ເກ່ຍຄະດີໄດ້ 455 ເລື່ອງ ໃນນີ້ສານປະຊາຊົນແຂວງໄກ່ເກ່ຍ 94 ເລື່ອງ ສານເຂດໄກ່ເກ່ຍ 361 ເລື່ອງ.

ທັງນີ້ ກໍໄດ້ເອົາໃຈໃສ່ແນະນຳສານຂັ້ນຕົ້ນ ແລະ ຂັ້ນອຸທອນເກັບກຳ ປະກອບຂໍ້ມູນຫຼັກຖານທີ່ກ່ຽວຂ້ອງກັບຄະດີໃຫ້ມີຄວາມຄົບຖ້ວນ ຮອບດ້ານ ແລະ ພຽງພໍຮຽກໂຈດ ແລະ ຈຳເລີຍ ມາມີສ່ວນຮ່ວມໃນການດຳເນີນຄະດີເບື້ອງຕົ້ນຕາມທີ່ກຳນົດໄວ້ໃນມາດຕາ 190 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ເພື່ອຢັ້ງຢືນຕໍ່ສານວ່າຫຼັກຖານຂອງຕົນທີ່ກ່ຽວຂ້ອງກັບຄະດີມີຫຍັງແດ່ ຫຼັກຖານໃດໄດ້ຍື່ນໃຫ້ສານແລ້ວມີຫຍັງແດ່ທີ່ຍັງບໍ່ທັນໄດ້ຍື່ນຕໍ່ສານ ຂໍ້ຂັດແຍ່ງດັ່ງກ່າວມີການພົວພັນກັບບຸກຄົນໃດແດ່ ບາງຂໍ້ຂັດແຍ່ງເປັນຕົ້ນກ່ຽວກັບທີ່ດິນການອໍທາງຜ່ານ ຫຼື ກ່ຽວກັບເຂດແດນທີ່ເຫັນວ່າບໍ່ທັນຈະແຈ້ງຊັດເຈນ ກໍຕ້ອງໄດ້ລົງໄປຕິດຕາມຕົວຈິງ ຫຼັກຖານທີ່ໂຈດ ແລະ ຈຳເລີຍນຳມາຍື່ນຕໍ່ສານນັ້ນໄດ້ແຈ້ງໃຫ້ໂຈດ ແລະ ຈຳເລີຍຮັບຊາບ ເພື່ອມີຄຳເຫັນໂຕ້ແຍ່ງ ຫຼື ອະທິບາຍໃຫ້ສານໄດ້ຮັບຮູ້ ແລະ ເຂົ້າໃຈຄວາມເປັນຈິງຂອງທຸກຝ່າຍຫາກການໂຕ້ແຍ່ງ ຫຼື ຊີ້ແຈງບໍ່ເປັນເອກະພາບກັນກໍໄດ້ຮຽກໂຈດ ແລະ ຈຳເລີຍ ພ້ອມດ້ວຍພະຍານທີ່ກ່ຽວຂ້ອງມາຊ້ອງໜ້າກັນເພື່ອຊອກຫາຄວາມຈິງ ພ້ອມນັ້ນກໍໄດ້ເອົາໃຈໃສ່ເປັນພິເສດຕໍ່ການຊັ່ງຊາຕີລາຄາຫຼັກຖານໃນຄະດີຂອງແຕ່ລະຝ່າຍທີ່ມີໃນສຳນວນຄະດີຢ່າງກົງໄປກົງມາຕາມຫຼັກການພິຈາລະນາຕັດສິນເປັນໝູ່ຄະນະ ມີການກວດກາ ໄຈ້ແຍກຄັດຈ້ອນວ່າອັນໃດກ່ຽວພັນ ບໍ່ກ່ຽວພັນກັບຄະດີ ຫຼັກຖານໃດເຊື່ອໝັ້ນໄດ້ ແລະ ເຊື່ອໝັ້ນບໍ່ໄດ້ຂໍ້ບົກພ່ອງສິ່ງໃສເພື່ອເປັນຂໍ້ມູນຊີ້ແຈງອະທິບາຍໃຫ້ໂຈດ ແລະ ຈຳເລີຍຮັບຮູ້ ແລະ ເຂົ້າໃຈ.

ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດທີ VIII ມາເຖິງປັດຈຸບັນ ຄະດີເຂົ້າໃໝ່ຢູ່ສານຂັ້ນຕົ້ນ (ສານເຂດ ແຂວງ ນະຄອນຫຼວງ ແລະ ສານທະຫານພາກ) ຈຳນວນ 6.865 ເລື່ອງ ຄ້າງມາກ່ອນ 1.687 ເລື່ອງ ລວມທັງໝົດ 8.552 ເລື່ອງ ໄດ້ມີການຕັດສິນແລ້ວ 6.731 ເລື່ອງ ພາຍຫຼັງຕັດສິນແລ້ວຄູ່ຄວາມພໍໃຈ ແລະ ເຫັນດີນຳໄປຈັດຕັ້ງປະຕິບັດ 5.732 ເລື່ອງ ກວມເອົາ 85,16% ຄູ່ຄວາມບໍ່ພໍໃຈອຸທອນ 999 ເລື່ອງ ກວມເອົາ 14,84% ຄະດີທີ່ຄູ່ຄວາມອຸທອນ ລວມທັງຄະດີທີ່ຄ້າງມາຢູ່ສານຂັ້ນອຸທອນລວມທັງໝົດ 1.387 ເລື່ອງ ໄດ້ພິພາກສາໄປແລ້ວ 1.001 ເລື່ອງ ພາຍຫຼັງພິພາກສາແລ້ວຄູ່ຄວາມພໍໃຈຕໍ່ການຕັດສິນ ແລະ ເຫັນດີນຳໄປຈັດຕັ້ງປະຕິບັດກວມເອົາ 85,16% ມີພຽງ 14,84% ທີ່ຄູ່ຄວາມບໍ່ພໍໃຈອຸທອນຄຳຕັດສິນຂອງສານ ພ້ອມນັ້ນໃນຈຳນວນຄະດີທີ່ອຸທອນ 14,84% ນັ້ນສານຂັ້ນອຸທອນໄດ້ພິພາກສາແລ້ວຄູ່ຄວາມພໍໃຈຕໍ່ຄຳພິພາກສາ ແລະ ເຫັນດີໄປຈັດຕັ້ງປະຕິບັດກວມເອົາ 57,35% ມີພຽງ 42,65% ທີ່ຄູ່ຄວາມບໍ່ພໍໃຈຂໍລົບລ້າງ ນີ້ໄດ້ຢັ້ງຢືນໃຫ້ເຫັນວ່າການດຳເນີນຄະດີຢູ່ສານຂັ້ນຕົ້ນ ແລະ ຂັ້ນອຸທອນມີຄຸນະພາບ ແລະ ປະສິດທິພາບນັບມື້ສູງຂຶ້ນ.

ພາຍຫຼັງການລາຍງານຄັ້ງນີ້ ສສຊ ຫຼາຍເຂດຍັງໄດ້ປະກອບຄວາມເຫັນໃຫ້ສານທຸກຂັ້ນພິຈາລະນາຄະດີທີ່ເຫັນວ່າມີການແກ່ຍາວຈົນເກີນໄປ ແລະ ຄວນສົ່ງເສີມໃຫ້ມີທະນາຍຄວາມດ້ານກົດໝາຍ ເພື່ອມາຕໍ່ລອງອຸທອນຄະດີໃນຂັ້ນສານຈະເຮັດໃຫ້ຄະດີມີຄວາມວ່ອງໄວ ແລະ ໂປ່ງໃສ ທະນາຍຄວາມທີ່ກ່າວມານີ້ຕ້ອງມີວຸດທິການສຶກສາລະດັບປະລິນຍາຕີ ແລະ ຕ້ອງມີປະສົບການເຮັດວຽກຢ່າງຕ່ຳ 5 ປີຂຶ້ນໄປ.

**ໂດຍ: ສ.ໂສພາ**

---

# ຫຼາຍບັນຫາທີ່ປະຊາຊົນນຳສະເໜີ ພາກສ່ວນກ່ຽວຂ້ອງຕ້ອງສຸມໃສ່ແກ້ໄຂ



● **ທ່ານນາງ ວາລີ ເວດຊະພົງ** ຮອງປະທານສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດ ສະມາຊິກສະພາແຫ່ງຊາດ (ສສຊ) ເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ໃຫ້ສຳພາດຕໍ່ສື່ມວນຊົນ ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ VIII ວ່າ: ໄລຍະຜ່ານມາການປະຕິບັດໜ້າທີ່ຂອງການເປັນຜູ້ແທນປະຊາຊົນຂອງຂ້າພະເຈົ້າທີ່ໄດ້ເຂົ້າຮ່ວມກັບຄະນະ ສສຊ ລົງພົບປະປະຊາຊົນແມ່ນໄດ້ຮັບການຕອບຮັບເປັນຢ່າງດີ ແລະ ມາໃນຊຸດນີ້ ສສຊ ກໍຄືພາກສ່ວນກ່ຽວຂ້ອງແມ່ນມີຄວາມຕື່ນຕົວສູງ ໃຫ້ຄວາມສົນໃຈວຽກງານຂອງບ້ານເມືອງຫຼາຍຂຶ້ນ ເວລາມີກອງປະຊຸມສະພາເທື່ອໃດ ຖືວ່າເຂົາເຈົ້າຈະມີການຕິດຕາມຂໍ້ມູນຂ່າວສານຢູ່ຕະຫຼອດ ສະນັ້ນ ສິ່ງທີ່ປະຊາຊົນໃຫ້ຄວາມສົນໃຈຫຼາຍ ແມ່ນບັນຫາເລື່ອງຜົນກະທົບໃນການລົງທຶນຂະໜາດໃຫຍ່ຂອງລັດຖະບານທີ່ກະທົບໃສ່ໃນເລື່ອງຂອງບັນຫາທີ່ດິນ ການເວນຄືນທີ່ດິນບໍ່ວ່າຈະເປັນມູນຄ່າ ມີບາງພາກສ່ວນຖືວ່າໃນຫຼາຍປີຜ່ານມາຍັງບໍ່ທັນໄດ້ຮັບການແກ້ໄຂ ບາງຄົນມີດິນຕອນດຽວກໍບໍ່ສາມາດເຂົ້າໄປໃນພື້ນທີ່ຂອງຕົນເອງໄດ້ ອັນນີ້ເປັນສິ່ງທີ່ປະຊາຊົນສະເໜີຕໍ່ ສສຊ ພວກເຮົາຫຼາຍທີ່ສຸດ ເຊິ່ງໃນນັ້ນ ສະພາກໍຖືເປັນວຽກບູລິມະສິດທີ່ຕ້ອງໄດ້ຕິດຕາມກວດກາບຳພາກສ່ວນທີ່ກ່ຽວຂ້ອງເພື່ອແກ້ໄຂບັນຫາໃຫ້ທວງທັນ.

ອີກບັນຫາໜຶ່ງທີ່ປະຊາຊົນໄດ້ໃຫ້ຄວາມສົນໃຈຫຼາຍແມ່ນເລື່ອງເສດຖະກິດ ເຊິ່ງທາງຜູ້ແທນພວກເຮົາກໍໄດ້ເຮັດໜ້າທີ່ອະທິບາຍໃຫ້ປະຊາຊົນເຂົ້າໃຈໃນຄວາມຈຳເປັນວ່າລັດຖະບານຢູ່ໃນໄລຍະປັບປຸງໂຄງຮ່າງເສດຖະກິດ ປັບປຸງທຸກວຽກງານທີ່ມີບັນຫາໃນໄລຍະຜ່ານມາ ເພື່ອເຮັດໃຫ້ບັນຍາກາດຂອງປະຊາຊົນເຂົ້າໃຈນັ້ນ ພວກເຮົາກໍໄດ້ຮຽກຮ້ອງວ່າ ທຸກພາກສ່ວນ ລວມທັງປະຊາຊົນເອງກໍຕ້ອງເຂົ້າມາມີສ່ວນຮ່ວມໃນການແກ້ໄຂບັນຫາທີ່ເກີດຂຶ້ນຊ່ວຍກັນ.

ນອກຈາກນີ້ ສິ່ງທີ່ປະຊາຊົນໃຫ້ຄວາມສົນໃຈຫຼາຍ ກໍຄືຄວາມໂປ່ງໃສໃນການຈັດເກັບລາຍຮັບຂອງລັດຖະບານ ນອກນັ້ນກໍແມ່ນການກວດສອບຄວາມໂປ່ງໃສ ຫຼື ວ່າມາດຕະການ ເພື່ອປັບປຸງການສໍ້ລາດບັງຫຼວງຂອງລັດຖະບານ ຖ້າຫາກວ່າກວດກາເຫັນແລ້ວລະດັບຕົວເລກຈະໄປໃສ ? ຈະເກັບຄືນມາໄດ້ແນວໃດ ? ເຊິ່ງພວກເຮົາກໍໄດ້ອະທິບາຍໃນນາມຖານະທີ່ເປັນຕົວແທນຂອງປະຊາຊົນວ່າພວກເຮົາໄດ້ເຮັດຫຍັງແດ່ໃນສະພາ ? ພວກເຮົາໄດ້ຕິດຕາມກວດກາແບບໃດ ? ຕາມພາລະບົດບາດຂອງຜູ້ແທນແຕ່ລະຄົນແມ່ນໄດ້ເຮັດວຽກໜັກເພື່ອເກັບກຳເອົາຂໍ້ມູນທັງ 2 ດ້ານ ແລະ ເຮົາກໍຕ້ອງເຂົ້າໃຈພາກປະຕິບັດງານຂອງລັດຖະບານ ເຂົ້າໃຈຕົ້ນຕໍຂອງບັນຫາຖ້າຫາກໄດ້ຂໍ້ມູນແລ້ວເຮົາຈຶ່ງມີການປະກອບຄຳເຫັນໃຫ້ມັນກົງປະເດັນ ເພື່ອຊ່ວຍກັນແກ້ໄຂບັນຫາໃຫ້ມັນຖືກຕ້ອງທ່ວງທັນ ບໍ່ວ່າຈະເປັນອຳນາດນິຕິບັນຍັດ ອຳນາດລັດບໍລິຫານ ເຮົາກໍແມ່ນພາຍໃຕ້ການນຳພາຂອງພັກອັນດຽວກັນ ເພາະສະນັ້ນການຈູນວຽກ ຫຼື ການປະຕິບັດພາລະບົດບາດຂອງແຕ່ລະຄົນເຂົ້າໃຈແລ້ວບັນຫາທຸກຢ່າງກໍຈະຄ່ອຍໆໄດ້ຮັບການແກ້ໄຂ.

ແນວໃດກໍຕາມ ສະພາແມ່ນໃຫ້ຄວາມສຳຄັນທຸກບັນຫາ ແຕ່ບັນຫາທີ່ພວກເຮົາຢາກໃຫ້ເອົາໃຈໃສ່ເປັນພິເສດ ເປັນຕົ້ນແມ່ນການແກ້ໄຂຄວາມທຸກຍາກຂອງປະຊາຊົນ ເຊິ່ງມັນກໍຕິດພັນກັບບັນຫາເລື່ອງທີ່ດິນທີ່ເວົ້າກັນມາຫຼາຍຍຸກ ຫຼາຍສະໄໝ ທີ່ປະຊາຊົນໄດ້ຮັບຜົນກະທົບຕໍ່ການລົງທຶນຂອງລັດຖະບານ ແລະ ບັນຫາເລື່ອງປາກທ້ອງ ການດຳລົງຊີວິດທີ່ຈະໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ອີກບັນຫາໜຶ່ງ ກໍຄືການສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງຂອງຜູ້ປະກອບການ ໂດຍລັດຖະບານຈະມີນະໂຍບາຍສົ່ງເສີມຄືແນວໃດ ? ເພື່ອໃຫ້ເຂົາເຈົ້າດຳເນີນທຸລະກິດໄປຕໍ່ໄດ້ ໃນຂະນະທີ່ປັດຈຸບັນມີຫຼາຍບໍລິສັດຫຼາຍພາກສ່ວນເສດຖະກິດແມ່ນມີການຢຸດສະງັກ ຈະໃຫ້ເຂົາໄປຕໍ່ໄດ້ແນວໃດ ? ບໍ່ວ່າຈະເປັນການກະຕຸ້ນທາງດ້ານການເງິນ ກະຕຸ້ນທາງດ້ານນະໂຍບາຍຕ່າງໆ ເພື່ອເຮັດໃຫ້ເຂົາເຈົ້າເຫຼົ່ານັ້ນຟື້ນໂຕຄືນມາ ແລະ ກັບມາຫາພັນທະໃຫ້ລັດຖະບານໄດ້ຫຼາຍຂຶ້ນ.

**ໂດຍ: ສາຍນ້ຳໝອກ**

---




## ຕິດສະແຕມໃສ່ເອກະສານດີ ຫຼື ບໍ່ ?

**ໂດຍ: ທິດດີ**

● ເພື່ອນຜູ້ອ່ານທ່ານໜຶ່ງສອງແສງມາເລື່ອງ**ການເກັບຄ່າເຊັນເອກະສານຢູ່ແຕ່ລະບ້ານບໍ່ເປັນເອກະພາບກັນ** ໂດຍສະເພາະ ຢູ່ນະຄອນຫຼວງວຽງຈັນ ເຊັ່ນ: ໄປເຊັນໃບຢັ້ງຢືນທີ່ຢູ່ ບາງບ້ານເກັບສິບພັນກີບບາງບ້ານເກັບສິບຫ້າພັນບາງບ້ານເຊັນເອກະສານຫຍັງກໍຊ່າງ ແຕ່ສອງຊະນິດຂຶ້ນໄປແມ່ນຫ້າສິບພັນກີບ ໂອນມອບກຳມະສິດແມ່ນ 2 ແສນກີບ... ຈາກຄວາມບໍ່ເປັນເອກະພາບນີ້ນຳມາເຊິ່ງທາງສຽງຈົ່ມວ່າ ເພາະບໍ່ຮູ້ວ່າເງິນຄ່າເຊັນເອກະສານນີ້ມັນເຂົ້າຢູ່ຖົງໃດ ? ກັນແທ້.

**ຜູ້ຂຽນໄດ້ອະທິບາຍວ່າ:** ລາຍຮັບທັງໝົດຂອງບ້ານຈະມີການແບ່ງສ່ວນກັບເມືອງ (ຖອກເຂົ້າງົບ) ຫຼັງຈາກນັ້ນເມືອງຈະອະນຸຍາດໃຫ້ບ້ານໃຊ້ຈ່າຍຄ່າບໍລິຫານຕ່າງໆພາຍໃນບ້ານ.

ເຖິງຢ່າງໃດວົງສົນທະນາກໍຕັ້ງບັນຫາເລື່ອງຄວາມເປັນເອກະພາບໃນການເກັບເງິນຄ່າເຊັນເອກະສານ ໂດຍໃຫ້ການຈັດຕັ້ງທີ່ກ່ຽວຂ້ອງປຶກສາຫາລືອອກເປັນນິຕິກຳຄັກແນ່ວາຊັ້ນ ! ບໍ່ທີ່ນັ້ນພວກເພິ່ນຍັງຕັ້ງບັນຫາ **ການຕິດສະແຕມໃສ່ເອກະສານ** ເພາະນັ້ນແມ່ນແຫຼ່ງລາຍຮັບໜຶ່ງຂອງກະຊວງການເງິນທີ່ບໍ່ຄວນເບິ່ງຂ້າມ ເພາະກະຊວງການເງິນເປັນຜູ້ຜະລິດສະແຕມ... ສະແຕມຕິດເອກະສານມີຫຼາຍປະເທດເພິ່ນກໍເຮັດວ່າຊັ້ນ ! ເວົ້າເລື່ອງສະແຕມຕິດເອກະສານນີ້ ຜູ້ຂຽນກໍເຄີຍເຫັນ ເຊິ່ງບໍ່ແມ່ນແຕ່ເອກະສານທາງການບໍລິຫານເທົ່ານັ້ນ ! ບັນດາເອກະສານກ່ຽວກັບການຊື້-ຂາຍ (ຂາຍຍົກ-ຂາຍຍ່ອຍ) ຫຼື ວ່າການດຳເນີນທຸລະກິດ (ເຈ້ຍຢັ້ງຢືນຕ່າງໆ) ລ້ວນແຕ່ມີສະແຕມຕິດຢັ້ງຢືນທັງນັ້ນ ຫາກແມ່ນວ່າ**ກະຊວງການເງິນອອກສະແຕມ** ຈະເຮັດໃຫ້ແຫຼ່ງລາຍຮັບເພີ່ມຂຶ້ນອາດສາມາດອຸດຊ່ອງຫວ່າງລົງໄດ້ ເພາະເອກະສານທຸກຢ່າງຕ້ອງຕິດສະແຕມ ເຖິງແມ່ນວ່າໄດ້ເສຍເງິນຖືກຕ້ອງ ຫາກບໍ່ມີການຕິດສະແຕມຢັ້ງຢືນກໍໝາຍວ່າບໍ່ໄດ້ເສຍເງິນພັນທະຖືກຕ້ອງ ໝາຍເຖິງການຫຼົບຫຼີກພັນທະ ອາດມີໂທດທາງກົດໝາຍ.

ເວົ້າເລື່ອງສະແຕມນີ້ບໍ່ແມ່ນເລື່ອງໃໝ່ ຄິດວ່າເຄີຍປະຕິບັດມາແລ້ວ ແຕ່ມັນມີໄລຍະໜຶ່ງປະໄປຊື່ໆດອກນໍ ? ສະນັ້ນ ມັນເຖິງເວລາແລ້ວ ຫຼື ບໍ່ ? ທີ່ຈະພາກັນຕັ້ງບັນຫາກັບເອົາສະແຕມມາໃຊ້ເພື່ອໃຫ້ການເກັບລາຍຮັບເພີ່ມຂຶ້ນ ທັງເປັນການອຸດຊ່ອງຫວ່າງບໍ່ໃຫ້ລາຍຮັບຮົ່ວໄຫຼໄປຕົກຢູ່ຖົງອື່ນແທນທີ່ຈະແມ່ນຖົງງົບປະມານແຫ່ງຊາດ.

**ຂໍສະເໜີເປັນການແລກປ່ຽນນໍ ?**

---




# WWF
## ປະກອບສ່ວນສ້າງໂຮງຮຽນຕົວແບບສີຂຽວ

● ໂຄງການຄຸ້ມຄອງ ແລະ ຊົມໃຊ້ປາ - ສັດນ້ຳອື່ນໆແບບຍືນຍົງເຂດສີພັນດອນ ແຂວງຈຳປາສັກ ໄລຍະໜຶ່ງ ໂດຍການສະໜັບສະໜູນຈາກ ອົງການກອງທຶນອານຸຮັກທຳມະຊາດໂລກປະຈຳລາວ (WWF) ເລີ່ມຈັດຕັ້ງປະຕິບັດມາແຕ່ເດືອນຕຸລາ 2012 ຫາເດືອນທັນວາ 2016 ຢູ່ 13 ບ້ານ ເມືອງມູນລະປະໂມກ ແລະ 17 ບ້ານ ເມືອງໂຂງ ແຂວງຈຳປາສັກ ລວມມີຫຼາຍກິດຈະກຳການສົ່ງເສີມບົດບາດຂອງແມ່ຍິງ ແລະ ສ້າງໂຮງຮຽນຕົວແບບສີຂຽວ ໂດຍສະເພາະການປູກຈິດສຳນຶກໃຫ້ແກ່ນັກຮຽນເຂົ້າໃນການຄຸ້ມຄອງຊັບພະຍາກອນປາ ສັດນ້ຳ ໃຫ້ມີຄວາມຍືນຍົງແລະສົ່ງເສີມການສ້າງລາຍຮັບໃຫ້ຊຸມຊົນ ບ້ານເປົ້າໝາຍ.



**ທ່ານນາງ ອຳພອນ ພົມມະຈັນ** ຜູ້ປະສານງານໂຄງການກ່າວວ່າ: ຈຸດປະສົງຂອງໂຄງການ ແນໃສ່ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ມີຄວາມໝັ້ນຄົງ ໂດຍຜ່ານກິດຈະກຳການຄຸ້ມຄອງການປະມົງແບບມີສ່ວນຮ່ວມເພື່ອເຮັດໃຫ້ການຊົມໃຊ້ຊັບພະຍາກອນປາ-ສັດນ້ຳໃຫ້ມີຄວາມຍືນຍົງ ເຮັດວຽກຢ່າງໃກ້ຊິດຕິດແທດກັບແຂວງ ເມືອງ ອຳນາດການປົກຄອງທ້ອງຖິ່ນ ແລະ ປະຊາຊົນໃນບ້ານເປົ້າໝາຍ ພ້ອມດຽວກັນ ຍັງປູກຈິດສຳນຶກ ແລະ ສ້າງໂຮງຮຽນຕົວແບບສີຂຽວໃນ 5 ບ້ານ ໂດຍອີງຕາມຕົວຊີ້ວັດຂອງພະແນກສຶກສາ ແລະ ກິລາ ແຂວງທີ່ວາງອອກ ສາມາດປະກາດເປັນໂຮງຮຽນສີຂຽວຕົວແບບ ເປັນແບບຢ່າງໃຫ້ແກ່ບັນດາໂຮງຮຽນໃນທ້ອງຖິ່ນ ແລະ ແຂວງໃກ້ຄຽງ ໄດ້ມາຖອດຖອນບົດຮຽນເພື່ອຜັນຂະຫຍາຍສ້າງໃຫ້ເປັນໂຮງຮຽນຕົວແບບສີຂຽວ.

ເບື້ອງຕົ້ນໄດ້ສຳຫຼວດຂໍ້ມູນພື້ນຖານເພື່ອຄັດເລືອກໂຮງຮຽນເປົ້າໝາຍໃນການສ້າງໂຮງຮຽນສີຂຽວຕົວແບບ ລົງປຶກສາຫາລືປະສານສົມທົບກັບພາກສ່ວນກ່ຽວຂ້ອງໂດຍສະເພາະ ຫ້ອງການສຶກສາໃນ 2 ເມືອງ ໄດ້ກຳນົດເອົາ 5 ໂຮງຮຽນໃນ 5 ບ້ານ (ເມືອງໂຂງ ໂຮງຮຽນປະຖົມບ້ານລົບປະດີ ຄອນນ້ອຍ ດອນຄອນ ແລະ ບ້ານຫາງສະດຳ ເມືອງມູນລະປະໂມກ ໂຮງຮຽນປະຖົມບ້ານປາໂມກ ແລະ ບ້ານນາດີ) ແນໃສ່ວຽກງານປູກຈິດສຳນຶກດ້ານການຄຸ້ມຄອງການປະມົງ ສິ່ງແວດລ້ອມ ທີ່ມີຜົນກະທົບຕໍ່ປາ ແລະ ສັດນ້ຳລວມທັງສ້າງໃຫ້ເປັນໂຮງຮຽນຕົວແບບສີຂຽວ.

ປັດຈຸບັນ ນອກຈາກການຈັດຕັ້ງປະຕິບັດໃນໂຮງຮຽນ 5 ແຫ່ງ ທາງໂຄງການຍັງໄດ້ເຮັດວຽກຮ່ວມກັບຂະແໜງປະຖົມ ພະແນກສຶກສາແຂວງ ແລະ ຫ້ອງການສຶກສາ 2 ເມືອງ ເພື່ອສືບຕໍ່ເກັບກາຂໍ້ມູນຈັດປະຊຸມລະດັບຂັ້ນເມືອງ ແຂວງ ເພື່ອວາງເປົ້າໝາຍໃນການສືບຕໍ່ສ້າງໂຮງຮຽນສີຂຽວຮ່ວມກັນໂດຍໄດ້ເຊີນບັນດາຄູອາຈານ 5 ໂຮງຮຽນພະນັກງານຈາກສຶກສາແຂວງ ພ້ອມດ້ວຍຜູ້ປະສານງານໂຄງການຂັ້ນແຂວງ ພະນັກງານໂຄງການ ຜູ້ຮັບຜິດຊອບກິດຈະກຳ ຜູ້ປະສານງານຂັ້ນຕ່າງໆ ຂອງສອງເມືອງເປົ້າໝາຍໄປທັດສະນະສຶກສາໂຮງຮຽນປະຖົມສົມບູນບ້ານປະທຸມພອນ ເມືອງປະທຸມພອນເຊິ່ງເປັນໂຮງຮຽນຕົວແບບສີຂຽວ ເພື່ອຖອດຖອນບົດຮຽນພ້ອມທັງສ້າງສື່ໂຄສະນາມອບອຸປະກອນໃຫ້ໂຮງຮຽນ ເປັນຕົ້ນກະດານຂ່າວ ຕູ້ໃສ່ປື້ມ ຖັງໃສ່ຂີ້ເຫຍື້ອ ເບ້ຍໄມ້ກິນໝາກ ເບ້ຍໄມ້ປະດັບ ປຶ້ມນິທານ ແລະ ແຜ່ນ CD ໃຫ້ກັບ 5 ໂຮງຮຽນເປົ້າໝາຍ ນຳໃຊ້ເຂົ້າໃນການເຄື່ອນໄຫວກິດຈະກຳປູກຈິດສຳນຶກພາຍໃນໂຮງຮຽນ ແລະ ໂຮງຮຽນໃກ້ຄຽງໃນວັນສຳຄັນຕ່າງໆ.

ນອກຈາກນີ້ຍັງສືບຕໍ່ໂຄສະນາເຜີຍແຜ່ຈັດກິດຈະກຳແຂ່ງຂັນຖາມ-ຕອບຄວາມຮູ້ກ່ຽວກັບການຄຸ້ມຄອງຊົມໃຊ້ປາ ແລະ ສັດນ້ຳແບບຍືນຍົງ ແລະ ອານຸຮັກສິ່ງແວດລ້ອມ ສ້າງກະດານຂ່າວສານ ເຮັດໜານກ້າເບ້ຍໄມ້ ມີເປົ້າໝາຍນັກຮຽນເຂົ້າຮ່ວມ 801 ຄົນ ຍິງ 365 ຄົນ ແຕ່ຊັ້ນ ປ1-ປ5 ສ້າງເດັກອາສາໃນ 5 ໂຮງຮຽນເປົ້າໝາຍ ເພື່ອໃຫ້ກາຍເປັນຜູ້ສືບທອດໂຄສະນາເຜີຍແຜ່ປູກຈິດສຳນຶກ ແລະ ຂະຫຍາຍອອກສູ່ໂຮງຮຽນອື່ນຕໍ່ໄປ.

**ນຳສະເໜີໂດຍ: ແວ່ນຂາວ**